Lao - ສົງຄາມຕ້ານວິນຍານບົດນຳພຣະຄຳພີ - Spiritual Warfare Intro Scriptures

ລູກາ 17:5 ຝ່າຍອັຄສາວົກໄດ້ທູນຕໍ່ອົງພຣະຜູ້ເປັນເຈົ້າວ່າ, “ຂໍໂຜດຕື່ມໃຫ້ພວກຂ້ານ້ອຍມີ ຄວາມເຊື່ອຫລາຍກວ່າອີກ”

ໂຣມ 10:17 ດັ່ງນັ້ນຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍ ເພາະການປະກາດເຣື່ອງພຣະຄຣິດ

ລູກາ 11:1 ຢູ່ມາ ເມື່ອພຣະເຢຊູຊົງອ້ອນວອນຢູ່ໃນບ່ອນນຶ່ງ ພໍສິ້ນສຸດລົງສາວົກຂອງພຣະອົງ ຄົນນຶ່ງທູນວ່າ, “ນາຍເອີຍ, ຂໍສອນຂ້ານ້ອຍໃຫ້ອ້ອນວອນເຫມືອນໂຍຮັນໄດ້ສອນພວກ ສິດຂອງຕົນ”

1 ຕິໂມທຽວ 2:1-4 ເຫດສັນນັ້ນກ່ອນສິ່ງອື່ນໃດ ເຮົາຂໍຮ້ອງເຈົ້າທັງຫລາຍໃຫ້ອ້ອນວອນ ໄຫວ້ວອນ ທູນຂໍ ແລະຂອບພຣະຄຸນເພື່ອຄົນທັງປວງ 2 ເພື່ອກະສັດທັງຫລາຍ ແລະເພື່ອ ຄົນທັງປວງທີ່ມີຕຳແຫນ່ງສູງ ເພື່ອເຮົາທັງຫລາຍຈະໄດ້ດຳເນີນຊີວິດຢ່າງງຽບໆ ແລະສງົບ ສຸກ ໃນທາງທັມແລະສະງ່າຜ່າເຜີຍທຸກຢ່າງ 3 ການເຮັດແນວນັ້ນເປັນການດີ ແລະເປັນທີ່ ຊອບພຣະທັຍພຣະເຈົ້າ ຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ 4 ຜູ້ຊົງມີພຣະປະສົງໃຫ້ຄົນ ທັງປວງພົ້ນ ແລະໃຫ້ສັງເກດຮູ້ຄວາມຈິງ

ເຊຄາຣິຢາ 3:1,2 ແລ້ວທ່ານໄດ້ສະແດງໃຫ້ຂ້າພະເຈົ້າເຫັນໂຍຊວຍມະຫາປະໂຣຫິດ ຊຶ່ງຢືນຢູ່ ຫນ້າທູດສວັນຂອງພຣະຜູ້ເປັນເຈົ້າ ແລະຊາຕານຢືນຢູ່ຂ້າງຂວາມືຂອງທ່ານ ຈະຟ້ອງ ທ່ານ 2 ແລະພຣະຜູ້ເປັນເຈົ້າກ່າວກັບຊາຕານວ່າ, “ໂອ ຊາຕານ ພຣະຜູ້ເປັນເຈົ້າສັ່ງ ຫ້າມເຈົ້າເຖີດ ພຣະຜູ້ເປັນເຈົ້າຜູ້ຊົງເລືອກກຸງເຢຣູຊາເລັມໄວ້ ຊົງຫ້າມເຈົ້າເຖີດ ນີ້ບໍ່ ແມ່ນດົ້ນຟືນທີ່ອອກມາຈາກໄຟດອກຫລື”

ເອເຟໂຊ 6:12 ເພາະວ່າເຮົາທັງຫລາຍບໍ່ໄດ້ຕໍ່ສູ້ກັບມະນຸດທັມມະດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ ຜູ້ມີອຳນາດ ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້ ແລະຕໍ່ສູ້ກັບກຳລັງວິນຍານ ຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ

ເອເຟໂຊ 6:10,11 ສຸດທ້າຍນີ້, ຂໍພວກທ່ານຈົ່ງມີກຳລັງເພີ້ມຂຶ້ນໃນອົງພຣະຜູ້ເປັນເຈົ້າ ແລະ ໃນຣິດເດດອັນແກ່ກ້າຂອງພຣະອົງ 11 ຈົ່ງສວມຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າ ເພື່ອ

ທ່ານທັງຫລາຍຈະສາມາດຍືນຕໍ່ສູ້ກັບກົນອຸບາຍຂອງພຍາມານໄດ້

ເອເຟໂຊ 6:13-17 ເຫດສັນນັ້ນ, ຈົ່ງຮັບເອົາຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າ ເພື່ອທ່ານ ທັງຫລາຍຈະສາມາດຕໍ່ຕ້ານໃນວັນຊົ່ວຮ້າຍນັ້ນ ແລະເມື່ອເຮັດແລ້ວຈະຢູ່ຢ່າງຫມັ້ນຄົງໄດ້ 14 ເຫດສັນນັ້ນ, ທ່ານທັງຫລາຍຈົ່ງຍືນຫມັ້ນ ເອົາຄວາມຈິງຄາດແອວໄວ້ເອົາຄວາມຊອບ ທັມເປັນເຄື່ອງປ້ອງການເອິກໄວ້ 15 ແລະເອົາຄວາມພັ່ງພ້ອມຝ່າຍຂ່າວປະເສີດເຣື່ອງສັນ ຕິສຸກມາສຸບໃສ່ຕີນ 16 ແລະພ້ອມກັບສິ່ງທັງຫມົດນີ້, ຈົ່ງຍົກເອົາຄວາມເຊື່ອເປັນເຂນ ດ້ວຍເຂນນັ້ນທ່ານທັງຫລາຍຈະສາມາດດັບລູກສອນໄຟທັງຫມົດຂອງຜູ້ຮ້າຍນັ້ນໃຫ້ ມອດເສັງ 17 ຈົ່ງເອົາຄວາມພົ້ນເປັນເຄື່ອງຄຸນປ້ອງຫົວໄວ້ ແລະຈົ່ງຖືພຣະແສງຂອງ ພຣະວິນຍານ ຄືພຣະທັມຂອງພຣະເຈົ້າ

ເຮັບເຣີ 4:12 ເພາະວ່າພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ ຄົມ ກວ່າດາບສອງຄົມທຸກດວງແທງຊອດເຖິງຈິດໃຈແລະວິນຍານຕລອດທັງຄ່ຳກະດູກແລະ ໄຂໃນກະດູກຕິດຕ່ຳກັນ ຈຶ່ງສັງເກດຮູ້ຄວາມຄຶດແລະຄວາມມຸ້ງຫມາຍໃນໃຈໄດ້

ລູກາ 4:8 ຝ່າຍພຣະເຍຊູຊົງຕອບມານວ່າ, “ມີຄຳຂຽນໄວ້ໃນພຣະຄັມພີວ່າ, “ຈົ່ງຂາບໄຫວ້ ພຣະອົງຜູ້ເປັນເຈົ້າຂອງເຈົ້າ ແລະປະຕິບັດພຣະອົງແຕ່ຜູ້ດຽວ”

ເອເຟໂຊ 6:18 ຈົ່ງອ້ອນວອນແລະໄຫວ້ວອນທຸກຢ່າງ ຈົ່ງອ້ອນວອນໂດຍພຣະວິນຍານທຸກເວ ລາ ແລະຈົ່ງເຝົ້າລະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງ ຈົ່ງອ້ອນວອນເພື່ອໄພ່ພົນ ທັງປວງຂອງພຣະເຈົ້າ

1 ຊາມູເອນ 17:45-47 ດາວິດເວົ້າຕອບວ່າ, “ເຈົ້າມາຕໍ່ສູ້ກັບຂ້ອຍດ້ວຍດາບ ຫອກແລະ ຫລາວ ແຕ່ວ່າ ຂ້ອຍມາຕໍ່ສູ້ເຈົ້າໃນພຣະນາມຂອງພຣະຜູ້ເປັນເຈົ້າແຫ່ງຈັກກະວານ ຊຶ່ງ ເປັນພຣະເຈົ້າຂອງກອງທັບອິສຣາເອນທີ່ເຈົ້າໄດ້ເວົ້າທ້າທາຍນັ້ນ 46 ໃນວັນນີ້ ພຣະຜູ້ ເປັນເຈົ້າຈະຊົງມອບເຈົ້າໄວ້ໃນອຳນາດຂອງຂ້ອຍ ເຈົ້າຈະຜ່ານແພ້ຂ້ອຍ ແລະຂ້ອຍຈະຕັດ ຫົວເຈົ້າອອກ ສ່ວນສົບຂອງທະຫານ ຟີລິສຕິນ ຂ້ອຍຈະເອົາໃຫ້ນົກແລະສັດກິນ ແລ້ວທົ່ວ ທັງໂລກຈະຮູ້ຈັກວ່າອິສຣາເອນມີພຣະເຈົ້າ 47 ແລະທຸກໆຄົນທີ່ຢູ່ໃນທີ່ນີ້ຈະເຫັນວ່າ ພຣະ ອົງບໍ່ຊົງຕ້ອງການດາບ ຫລືຫອກ ເພື່ອຊ່ວຍໃຫ້ໄພ່ພົນຂອງພຣະອົງພົ້ນພັຍ ພຣະອົງຊົງ ເປັນຜູ້ຊະນະໃນສະຫນາມຮົບ ແລະພຣະອົງຈະຊົງມອບພວກເຈົ້າທຸກຄົນໄວ້ໃນອຳນາດ ຂອງພວກຂ້ອຍ”

ລູກາ 10:17-20 ຝ່າຍພວກເຈັດສິບ(ສອງ)ຄົນນັ້ນໄດ້ກັບຄືນມາທູນວ່າ, “ນາຍເອີຍ, ເຖິງ
ແມ່ນຜີຮ້າຍກໍຍອມຟັງຄວາມຂອງພວກຂ້ານ້ອຍ ເພາະເຫັນແກ່ນາມຊື່ຂອງທ່ານ” 18
ພຣະອົງຊົງກ່າວກັບເຂົາວ່າ, “ເຮົາໄດ້ເຫັນຊາຕານຕົກຈາກຟ້າເຫມືອນດັ່ງຟ້າແມບ 19
ແລະເບິ່ງແມ່ນ, ເຮົາໄດ້ໃຫ້ພວກທ່ານມີອຳນາດຢຽບງູແລະແມງງອດ ແລະໃຫ້ມີອຳນາດ
ເຫນືອກຳລັງຂອງສັດຕຣູ ແລະບໍ່ມີສິ່ງໃດເຮັດອັນຕະຣາຍແກ່ພວກທ່ານໄດ້ 20 ແຕ່ວ່າ
ທ່ານທັງຫລາຍຢ່າໄດ້ຍິນດີຢູ່ໃນສິ່ງນີ້ ຄືເພາະຜີທັງຫລາຍຍອມຟັງຄວາມຂອງທ່ານ ແຕ່
ຈົ່ງຊົມຊື່ນຍິນດີເພາະຊື່ຂອງພວກທ່ານໄດ້ຈົດໄວ້ໃນສວັນແລ້ວ”

2 ໂກຣິນໂທ 10:3-5 ເພາະເຖິງແມ່ນວ່າເຮົາຢູ່ກົນໃນໂລກກໍຈິງ ເຮົາກໍບໍ່ໄດ້ສູ້ຮົບຕາມທຳມະ
ດາມະນຸດ 4 ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີຣິດອຳນາດຈາກພຣະ
ເຈົ້າ ອາດທຳລາຍຄ້າຍອັນເຂັ້ມແຂງໄດ້ ຄືທຳລາຍຄວາມຄິດທີ່ມີເຫດຜົນອັນບໍ່ຈິງ 5 ແລະ
ຄວາມດື້ດຶງທຸກປະການທີ່ຕັ້ງຕົວຂຶ້ນຂັດຂວາງຄວາມຮູ້ຈັກພຣະເຈົ້າ ແລະປາຍຄວາມຄິດ
ທຸກປະການລົງໃຫ້ຢູ່ໃຕ້ບັງຄັບ ຈົນເຖິງນ້ອມຟັງພຣະຄຣິດ

2 ຕິໂມທຽວ 1:7 ເພາະວ່າພຣະເຈົ້າບໍ່ໄດ້ຊົງປະທານໃຈອັນຢ້ານກົວໃຫ້ແກ່ເຮົາ ແຕ່ໄດ້ຊົງປະ
ທານໃຈອັນປະກອບດ້ວຍຣິດອຳນາດ ຄວາມຮັກ ແລະການບັງຄັບຕົນໃຫ້ແກ່ເຮົາ

ມັດທາຍ 12:28,29 ແຕ່ຖ້າເຮົາຂັບໄລ່ຜີອອກດ້ວຍພຣະວິນຍານຂອງພຣະເຈົ້າ ດັ່ງນັ້ນຣາຊ
ອານາຈັກຂອງພຣະເຈົ້າກໍມາເຖິງພວກທ່ານແລ້ວ 29 ຫລືໃຜຈະເຂົ້າໄປໃນເຮືອນຂອງຄົນ
ແຂງແຮງ ແລະລະບຸ້ນເອົາຊັບຂອງເຂົາໄດ້ຢ່າງໃດ ເວັ້ນໄວ້ແຕ່ຈະມັດຄົນແຂງແຮງນັ້ນໄວ້
ເສັຍກ່ອນ ແລ້ວຈຶ່ງຈະບຸ້ນເອົາຊັບໃນເຮືອນຂອງເຂົາໄດ້

ເອເຟໂຊ 1:13 ໃນພຣະອົງນັ້ນທ່ານທັງຫລາຍກໍເຫມືອນກັນ ເມື່ອໄດ້ຍິນພຣະທັມອັນສັດຈິງ
ຄືຂ່າວປະເສີດເຣື່ອງຄວາມພົ້ນຂອງພວກທ່ານ ແລະໄດ້ວາງໃຈໃນພຣະອົງ ກໍໄດ້ຖືກຊົງປະ
ທັບຕາຫມາຍໄວ້ດ້ວຍພຣະວິນຍານບໍຣິສຸດທີ່ຊົງສັນຍາໄວ້ນັ້ນ

Acts 19:6

Mark 16:15-18

1 ໂຍຮັນ 1:9 ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະ
ທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍ
ຈາກການອະທັມຫມົດສິ້ນ

ອົບພະຍົກ 20:5 ຢ່າຂາບໄຫວ້ຮູບເຫລົ່ານັ້ນ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ

ແລະເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ ເຮົາຈະລົງโทດລູກຫລານຂອງຜູ້ທີ່ຊັງເຮົາເຖິງ ສາມສີ່ຊົ່ວອາຍຸຄົນ

ເພງສັນລະເສີນ 109:17 ເຂົາຮັກທີ່ຈະແຊ່ງ ຂໍໃຫ້ຄຳແຊ່ງຕົກເທິງເຂົາ ເຂົາບໍ່ມັກການໃຫ້ພອນ ຂໍພອນຈົ່ງຫ່າງໄກຈາກເຂົາ

ພວກຜູ້ປົກຄອງ 16:16 ນາງເດວີລາໄດ້ຖາມຢູ່ທຸກມື້ ຈົນແຊມຊັນເບື່ອຫນ່າຍ ແລະຢາກຈະຕາຍເສັງຍ້ອນການຣົບກວນຂອງນາງ

ເອເຟໂຊ 4:26 ຈະຮ້າຍກໍຮ້າຍໄດ້ ແຕ່ຢ່າໃຫ້ຄວາມຮ້າຍເປັນເຫດໃຫ້ເກີດການຜິດບາບ ຢ່າຮ້າຍຢູ່ຈົນຕາເວັນຕົກ

ໂຣມ 14:12 ດັ່ງນັ້ນເຮົາທຸກຄົນຈະຕ້ອງກາບທູນເຣື່ອງຣາວຂອງຕົນເອງຕໍ່ພຣະເຈົ້າ

1 ໂຢຮັນ 2:23 ຜູ້ໃດທີ່ປະຕິເສດພຣະບຸດ ຜູ້ນັ້ນກໍບໍ່ມີພຣະບິດາ ຜູ້ໃດທີ່ຮັບຮູ້ພຣະບຸດ ຜູ້ນັ້ນກໍມີພຣະບິດາເຫມືອນກັນ

ໂຢຮັນ 14:6 ພຣະເຢຊູຊົງຕອບເຂົາວ່າ, “ເຮົານີ້ແຫລະ, ເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ

ມັດທາຍ 11:28-30 “ບັນດາຜູ້ທີ່ເຮັກການຫນັກຫນ່ວງແລະແບກພາຣະຫນັກ ຈົ່ງມາຫາເຮົາ ແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເມື່ອຍ 29 ຈົ່ງເອົາແອກຂອງເຮົາແບກໄວ້ ແລ້ວຮຽນຮູ້ຈາກເຮົາ ເພາະວ່າເຮົາເປັນຜູ້ໃຈອ່ອນສຸພາບແລະຖ່ອມວົງ ແລ້ວຈິດໃຈຂອງທ່ານຈະໄດ້ພົບຄວາມເຊົາເມື່ອຍ 30 ດ້ວຍວ່າແອກຂອງເຮົາກໍພໍເຫມາະ ແລະພາຣະຂອງເຮົາກໍເບົາ”

2 ໂກຣິນໂທ 6:2 ເພາະພຣະອົງຊົງກ່າວວ່າ, “ໃນຄາວທີ່ກະຣຸນາ ເຮົາໄດ້ຟັງເຈົ້າ ໃນວັນແຫ່ງຄວາມພົ້ນ ເຮົາໄດ້ສົງເຄາະເຈົ້າ” ບັດນີ້ແຫລະ, ຄືຄາວແຫ່ງພຣະກະຣຸນາ ບັດນີ້ແຫລະ, ຄືວັນແຫ່ງຄວາມໂຜດໃຫ້ພົ້ນ

ໂຣມ 10:13 ເພາະວ່າ, “ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ”